ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ ເລກທີ _0729_/ຜທ

ນະຄອນຫຼວງວຽງຈັນ, ວັນທີ 15/03/2012

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນສະຖິຕິ ປະຈຳແຂວງ, ນະຄອນ, ເມືອງ, ເທດສະບານ ແລະ ບ້ານ

- ອີງຕາມ ກົດໝາຍວ່າດ້ວຍສະຖິຕິ ຂອງ ສປປ ລາວ, ສະບັບເລກທີ 03/ ສພຊ, ລົງວັນທີ 30 ເດືອນມິຖຸນາ 2010;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນສະຖິຕິແຫ່ງຊາດ, ສະບັບ ເລກທີ 51/ນຍ, ລົງວັນທີ 25 ເດືອນກຸມພາ2011;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງສູນສະຖິຕິແຫ່ງຊາດ ແລະກົມຈັດຕັ້ງ ແລະ ພະນັກງານບົນພື້ນຖານການເຫັນດີເປັນເອກະພາບກັບບັນດາພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນ.

## ລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນອອກຂໍ້ຕົກລົງ:

## ພາກທີ I
## ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນສະຖິຕິປະຈຳແຂວງ, ນະຄອນ

## ໝວດທີI
## ບົດບັນຍັດທົ່ວໄປ

### ມາດຕາ1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງ **ສູນສະຖິຕິປະຈຳແຂວງ, ນະຄອນ**ແນໃສ່ຈັດຕັ້ງປະຕິບັດວຽກງານໃຫ້ມີຄວາມຄ່ອງຕົວ ແລະ ມີປະສິດທິຜົນສູງ.

ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

ສູນສະຖິຕິປະຈຳແຂວງ, ນະຄອນ ຊຶ່ງນຫຍໍ້ດ້ວຍຕົວອັກສອນວ່າ **"ສຕຂ"** ຊຶ່ງນເປັນພາສາຕ່າງປະເທດ **Provincial Statistics Centre (PSC)**, ສັງກັດໃນໂຄງປະກອບກົງຈັກຂອງພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນ, ສ່ວນດ້ານວິຊາການ, ການຈັດຕັ້ງ ແລະ ງົບປະມານ ຂຶ້ນກັບສາຍຕັ້ງ. ສຳລັບຊີວິດການເມືອງ ແມ່ນຂຶ້ນກັບພະແນກແຜນການ ແລະການລົງທຶນແຂວງ, ນະຄອນ ມີພາລະບົດບາດໃນການເກັບກຳ, ສັງລວມ, ປຸງແຕ່ງ, ວິໄຈຂໍ້ມູນ, ເຜີຍແຜ່, ພ້ອມທັງລາຍງານສະຖິຕິທາງການ ກ່ຽວກັບສະພາບເສດຖະກິດ-ສັງຄົມໃນລະດັບແຂວງ, ນະຄອນແຕ່ລະໄລຍະໃຫ້ສູນສະຖິຕິແຫ່ງຊາດ ແລະ ອົງການປົກຄອງຂັ້ນແຂວງ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3. ໜ້າທີ່

3.1. ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານເຂົ້າໃນການຈັດຕັ້ງປະຕິບັດຕົວຈິງໃນແຂວງ, ນະຄອນ. ສ້າງແຜນການ ເຄື່ອນໄຫວວຽກງານສະຖິຕິ ໃນຂອບເຂດຄວາມຮັບຜິດຊອບຂອງຕົນໃນແຕ່ລະໄລຍະ;

3.2. ຄົ້ນຄວ້າ ແລະ ສະເໜີ ຕໍ່ສູນສະຖິຕິແຫ່ງຊາດ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ບຸກຄະລາກອນສະຖິຕິ, ຄົ້ນຄວ້າສະເໜີປະຕິບັດນະໂຍບາຍຍ້ອງຍໍ ແລະ ລົງວິໄນ ຕໍ່ພະນັກງານສະຖິຕິ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3.3. ຄົ້ນຄວ້າ ແລະ ສະເໜີຕໍ່ສູນສະຖິຕິແຫ່ງຊາດ ກ່ຽວກັບການປະຕິບັດນະໂຍບາຍ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການສະໜອງຂໍ້ມູນ ແລະ ປະຕິບັດວິໄນ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ບໍ່ປະຕິບັດຕາມລະບອບການລາຍງານ ແລະ ພັນທະໃນການລາຍງານສະຖິຕິ ເຊິ່ງໄດ້ກຳນົດໄວ້ໃນ ມາດຕາ 20, 22 ແລະ 23 ຂອງກົດໝາຍວ່າດ້ວຍສະຖິຕິ;

3.4. ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ, ຂໍ້ຕົກລົງ, ຄຳສັ່ງເພື່ອໃຫ້ເຂົ້າໃຈເປັນເອກະພາບໃນການຈັດຕັ້ງປະຕິບັດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3.5. ຈັດຕັ້ງປະຕິບັດການເກັບກຳຂໍ້ມູນສະຖິຕິ ແລະ ທວງເອົາຂໍ້ມູນສະຖິຕິຕາມການລາຍງານບໍລິຫານ ແລະ ການສຳຫຼວດເຊັ່ນ: ການສຳຫລວດໃຫຍ່, ການສຳຫຼວດແບບຕົວແທນ ແລະ ການສຳຫຼວດສະເພາະ ໃນຂອບເຂດທ້ອງຖິ່ນຂອງຕົນ;ສັງລວມ, ປຸງແຕ່ງ, ວິໄຈ, ຈັດພິມ, ເຜີຍແຜ່ຂໍ້ມູນສະຖິຕິທາງການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3.6. ສ້າງຕາຕະລາງເກັບກຳ,ສ້າງປຶ້ມຄູ່ມື, ເຂົ້າຮ່ວມປຶກສາຫາລື, ປະກອບຄຳເຫັນທາງດ້ານວິຊາການ ກ່ຽວກັບສະຖິຕິ ຕາມຄວາມຮັບຜິດຊອບຂອງຕົນ; ຊຸກຍູ້ສູນສະຖິຕິປະຈຳເມືອງ, ເທດສະບານ ໃນການຈັດຕັ້ງປະຕິບັດວຽກງານສະຖິຕິ ດ້ວຍການນຳໃຊ້ກົນໄກ ແລະ ວິທີການປະສານງານທີ່ເໝາະສົມ;

3.7. ບຳລຸງ, ກໍ່ສ້າງ, ສຶກສາອົບຮົມ, ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານດ້ານສະຖິຕິໃຫ້ແກ່ລັດຖະກອນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3.8. ສະຫຼຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານສະຖິຕິໃຫ້ສູນສະຖິຕິແຫ່ງຊາດ, ພະແນກແຜນການ ແລະ ການລົງທຶນ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ ແລະ ທັນເວລາ;

3.9. ປະຕິບັດໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

## ມາດຕາ 4. ຂອບເຂດສິດ

4.1. ອອກແຈ້ງການ ແລະ ຄຳແນະນຳກ່ຽວກັບການດຳເນີນວຽກງານສະຖິຕິ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4.2. ຊີ້ນຳ, ຄຸ້ມຄອງ ແລະຈັດຕັ້ງປະຕິບັດວຽກງານ ການຜະລິດ ແລະ ການເຜີຍແຜ່ ສະຖິຕິທາງການຂອງແຂວງ, ນະຄອນ, ເມືອງ, ເທດສະບານໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4.3. ຄົ້ນຄວ້າ ແລະ ສະເໜີສູນສະຖິຕິແຫ່ງຊາດ ແຕ່ງຕັ້ງ, ຍົກຍ້າຍໜ້າທີ່ ຫຼື ປົດຕຳແໜ່ງຫົວໜ້າ ແລະ ຮອງຫົວໜ້າສູນສະຖິຕິປະຈຳເມືອງ, ເທດສະບານ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງພາຍໃນສູນສະຖິຕິປະຈຳແຂວງ, ນະຄອນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນບົນພື້ນຖານຄວາມເຫັນດີເປັນເອກະພາບກັບພະແນກແຜນການ ແລະການລົງທຶນແຂວງ ແລະ ຄະນະຈັດຕັ້ງຂອງແຂວງ, ນະຄອນ;

4.4. ພົວພັນ, ຮ່ວມມືສາກົນ ກ່ຽວກັບວຽກງານສະຖິຕິ ໂດຍຜ່ານສູນສະຖິຕິແຫ່ງຊາດ;

4.5. ຕິດຕາມ, ກວດກາ ແລະ ປະເມີນ ກ່ຽວກັບລະບອບວິທີວິທະຍາສະຖິຕິ ແລະ ການເຄື່ອນໄຫວວຽກງານສະຖິຕິ ຕາມແຜນດຳເນີນງານຂອງສູນສະຖິຕິປະຈຳເມືອງ, ເທດສະບານ ແລະ ຂະແໜງສະຖິຕິຂອງພະແນກການອ້ອມຂ້າງແຂວງ, ນະຄອນ ໃນແຕ່ລະໄລຍະ;

4.6. ປະຕິບັດສິດອື່ນໆ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

ສູນສະຖິຕິປະຈຳແຂວງ, ນະຄອນ ປະກອບດ້ວຍ:

1. ຂະແໜງບໍລິຫານສັງລວມ;
2. ຂະແໜງສະຖິຕິເສດຖະກິດ;
3. ຂະແໜງສະຖິຕິສັງຄົມ.

**ມາດຕາ6. ໂຄງປະກອບບຸກຄະລາກອນ**

1. ຫົວໜ້າສູນສະຖິຕິປະຈຳແຂວງ, ນະຄອນ01 ທ່ານ ມີຖານະທຽບເທົ່າຫົວໜ້າພະແນກຂອງສູນສະຖິຕິແຫ່ງຊາດ ແລະ ເທົ່າກັບຮອງຫົວໜ້າພະແນກຂອງແຂວງ, ນະຄອນ ໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງໂດຍລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ຕາມການສະເໜີຂອງສູນສະຖິຕິແຫ່ງຊາດ ບົນພື້ນຖານການເຫັນດີເປັນເອກະພາບຂອງກົມຈັດຕັ້ງ ແລະ ພະນັກງານ ກະຊວງແຜນການ ແລະ ການລົງທຶນ ແລະ ແຂວງທີ່ກ່ຽວຂ້ອງ;
2. ສູນສະຖິຕິປະຈຳແຂວງ, ນະຄອນ ປະກອບມີຮອງຫົວໜ້າສູນຈຳນວນໜຶ່ງ ມີຖານະທຽບເທົ່າຮອງຫົວໜ້າພະແນກຂອງສູນສະຖິຕິແຫ່ງຊາດ ແລະ ເທົ່າກັບຫົວໜ້າຂະແໜງເຊິ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງ ຈາກລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ຕາມການສະເໜີຂອງສູນສະຖິຕິແຫ່ງຊາດ ບົນພື້ນຖານຄວາມເປັນເອກະພາບຂອງກົມຈັດຕັ້ງ ແລະ ພະນັກງານ ກະຊວງແຜນການ ແລະ ການລົງທຶນ;

   ຮອງຫົວໜ້າສູນສະຖິຕິປະຈຳແຂວງ, ນະຄອນ ເປັນຜູ້ຊ່ວຍຫົວໜ້າຫົວໜ້າສູນສະຖິຕິປະຈຳແຂວງ, ນະຄອນ ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງຫົວໜ້າສູນສະຖິຕິປະຈຳແຂວງ, ນະຄອນ.
3. ສູນສະຖິຕິປະຈຳແຂວງ, ນະຄອນມີຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງຈຳນວນໜຶ່ງ, ເຊິ່ງໄດ້ຮັບການແຕ່ງຕັ້ງຫລື ປົດຕຳແໜ່ງ ຈາກລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ຕາມການສະເໜີຂອງສູນສະຖິຕິແຫ່ງຊາດ ບົນພື້ນຖານຄວາມເປັນເອກະພາບຂອງກົມຈັດຕັ້ງ ແລະພະນັກງານ ກະຊວງແຜນການ ແລະ ການລົງທຶນ, ພ້ອມກັນນັ້ນກໍ່ຍັງມີວິຊາການຈຳນວນໜຶ່ງ ປະກອບເຂົ້າໃນແຕ່ລະຕຳແໜ່ງງານຕາມຄວາມເໝາະສົມ.

## ໝວດທີ IV
## ໜ້າທີ່ຂອງແຕ່ລະຂະແໜງ

**ມາດຕາ 7. ໜ້າທີ່ຂອງຂະແໜງບໍລິຫານສັງລວມ**

7.1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ລະບຽບກົດໝາຍສະຖິຕິ, ແຜນຍຸດທະສາດ, ສ້າງແຜນດຳເນີນງານ ແລະ ແຜນງົບປະມານເພື່ອພັດທະນາວຽກງານສະຖິຕິ ໃນຂອບເຂດຕົນຮັບຜິດຊອບ;

7.2. ພັດທະນາ ກົນໄກປະສານງານລະຫວ່າງສາຍຕັ້ງ ແລະ ສາຍຂວາງ, ການຈັດຕັ້ງປະຕິບັດບັນດາຫຼັກມູນສະຖິຕິ ແລະ ລະບອບວິທີສະຖິຕິ;

7.3. ບໍລິຫານ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ ແຜນຍຸດທະສາດ, ແຜນງານ, ໂຄງການ ແລະ ກົດໝາຍທີ່ໄດ້ຮັບອະນຸຍາດ;

7.4. ຄຸ້ມຄອງ ແລະ ຮັບຜິດຊອບການນຳໃຊ້ງົບປະມານ ຂອງສູນສະຖິຕິປະຈຳແຂວງ, ເມືອງ ແລະ ບ້ານ ພ້ອມທັງຈັດສັນງົບປະມານຕາມແຜນ, ຄຸ້ມຄອງຄັງເງິນສົດ, ເງິນໂອນ ແລະ ການລົງຕິດຕາມ ເມື່ອມີການເຄື່ອນໄຫວວຽກງານຢູ່ເມືອງ ແລະບ້ານ;

7.5. ຮັບຜິດຊອບຄິດໄລ່ ແລະ ເບີກຈ່າຍເງິນເດືອນ, ເງິນອຸດໜູນ, ເງິນນະໂຍບາຍ ແລະເງິນຮ່ວງອື່ນໆ ສຳລັບຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ຕາມລະບຽບການຂອງກະຊວງການເງິນ ແລະ ສູນສະຖິຕິແຫ່ງຊາດໄດ້ກຳນົດໄວ້;

7.6. ຈັດຊື້ ແລະ ຄຸ້ມຄອງຊັບສິນ ລວມທັງ ວັດຖຸອຸປະກອນ ທາງດ້ານເທັກໂນໂລຊີເຂົ້າຊ່ວຍໃນການຜະລິດ ແລະ ການເຜີຍແຜ່ສະຖິຕິ ເສດຖະກິດ-ສັງຄົມເຮັດໃຫ້ການຜະລິດສະຖິຕິທາງການໃນຂົງເຂດດັ່ງກ່າວບັນລຸຜົນສຳເລັດຕາມວັດຖຸປະສົງ ແລະ ຄາດໝາຍທີ່ວາງໄວ້;

7.7. ບໍລິຫານ ແລະຄຸ້ມຄອງການຈັດພິມ ແລະ ເຜີຍແຜ່ ຂໍ້ມູນສະຖິຕິທາງການ ໃນຂົງເຂດສະຖິຕິ ເສດຖະກິດ-ສັງຄົມຂອງແຂວງ, ນະຄອນ;

7.8. ສັງລວມການວາງແຜນ ແລະ ຈັດຕັ້ງປະຕິບັດແຜນກໍ່ສ້າງ, ບຳລຸງ ແລະ ຍົກລະດັບຄວາມຮູ້ ຄວາມສາມາດ ກ່ຽວກັບວຽກງານ ການບໍລິການສະຖິຕິ ແລະ ທາງດ້ານການສ້າງ, ປັບປຸງ ລະບົບການຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນຂ່າວສານເທັກໂນໂລຊີ;

7.9. ສະເໜີ ການກຳນົດຕຳແໜ່ງງານ, ບັນຈຸ, ຊັບຊ້ອນ, ຍົກຍ້າຍ, ສຶກສາ ອົບຮົມ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ ຂອງສູນສະຖິຕິປະຈຳແຂວງ, ນະຄອນ ແລະ ສູນສະຖິຕິປະຈຳເມືອງ, ເທດສະບານຕໍ່ຂັ້ນເທິງໃຫ້ຖືກຕ້ອງຕາມລະບຽບຫລັກການຂອງສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ແລະ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ;

7.10. ສັງລວມຜົນຄົ້ນຄວ້າ ແລະ ສະເໜີ ການປັບປຸງກົງຈັກການຈັດຕັ້ງ, ບຸກຄະລະກອນສະຖິຕິ ພາຍໃນສູນສະຖິຕິປະຈໍາແຂວງ, ນະຄອນ;

7.11. ຄົ້ນຄວ້າສະເໜີ ປະຕິບັດນະໂຍບາຍຍ້ອງຍໍ ແລະ ລົງວິໄນຕໍ່ພະນັກງານສະຖິຕິ ພາຍໃນສູນສະຖິຕິປະຈໍາແຂວງ, ນະຄອນ ແລະ ພະນັກງານຂອງສູນສະຖິຕິປະຈໍາເມືອງ ແລະ ຈຸງານສະຖິຕິປະຈໍາບ້ານ;

7.12. ສັງລວມ ຜົນການ ຄົ້ນຄວ້າ ແລະ ສະເໜີ ປະຕິບັດນະໂຍບາຍ ຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ມີຜົນງານໃນການປະກອບສ່ວນການຜະລິດສະຖິຕິທາງການ, ປະຕິບັດວິໄນຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ບໍ່ປະຕິບັດ ຕາມລະບອບການລາຍງານ ແລະ ພັນທະໃນການລາຍງານ ສະຖິຕິ ເຊິ່ງໄດ້ກໍານົດໄວ້ໃນ ມາດຕາ 20, 22 ແລະ 23 ຂອງກົດໝາຍວ່າດ້ວຍສະຖິຕິ;

7.13. ສັງລວມ, ສະຫລຸບ, ລາຍງານຜົນ ຂອງການຈັດຕັ້ງປະຕິບັດວຽກງານຂອງບັນດາຂະແໜງ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

7.14. ປະຕິບັດໜ້າທີ່ອື່ນໆຕາມທີ່ໄດ້ກໍານົດໄວ້ ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 8. ໜ້າທີ່ຂອງຂະແໜງສະຖິຕິເສດຖະກິດ**

8.1. ຜັນຂະຫຍາຍບັນດານິຕິກໍາຕ່າງໆກ່ຽວກັບ ການຄຸ້ມຄອງສະຖິຕິເວົ້າລວມ, ເວົ້າສະເພາະແມ່ນສະຖິຕິ ເສດຖະກິດໃຫ້ສອດຄ່ອງ ກັບສະພາບຕົວຈິງໃນແຕ່ລະໄລຍະ;

8.2. ຊີ້ນໍາ,ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນງານ, ໂຄງການ ແລະ ກົດຫມາຍທີ່ໄດ້ຮັບອະນຸຍາດ ແລະ ການພັດທະນາສະຖິຕິ ເສດຖະກິດ ເຮັດໃຫ້ການຜະລິດສະຖິຕິທາງການ ໃນຂົງເຂດດັ່ງກ່າວ ບັນລຸຜົນສໍາເລັດຕາມວັດຖຸປະສົງ ແລະ ຄາດຫມາຍທີ່ວາງໄວ້;

8.3. ໂຄສະນາ,ເຜີຍແຜ່ນະໂຍບາຍ, ລະບຽບກົດຫມາຍ, ແຜນຍຸດທະສາດ, ແຜນດໍາເນີນງານ, ຈັດຕັ້ງປະຕິບັດວຽກງານການຜະລິດ, ການເຜີຍແຜ່ ສະຖິຕິທາງການ ໃນຂົງເຂດສະຖິຕິເສດຖະກິດ;

8.4. ສ້າງຕາຕະລາງເກັບກໍາ, ປື້ມຄູ່ມື ການເກັບກໍາ ແລະ ທວງເອົາຂໍ້ມູນສະຖິຕິ. ສັງລວມ, ປຸງແຕ່ງ, ວິໄຈ, ເພື່ອການຜະລິດ, ການຈັດພິມ ແລະ ເຜີຍແຜ່ ຂໍ້ມູນສະຖິຕິທາງການ ໃນຂົງເຂດ ສະຖິຕິເສດຖະກິດ;

8.5. ວາງແຜນ ແລະ ຈັດຕັ້ງປະຕິບັດ ແຜນກໍ່ສ້າງ, ບໍາລຸງ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ກ່ຽວກັບວຽກງານສະຖິຕິ ເສດຖະກິດ;

8.6. ສະຫລຸບ, ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານສະຖິຕິເສດຖະກິດໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

8.7. ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 9. ໜ້າທີ່ ຂອງຂະແໜງສະຖິຕິສັງຄົມ**

9.1. ຜັນຂະຫຍາຍບັນດານິຕິກຳຕ່າງໆກ່ຽວກັບ ການຄຸ້ມຄອງສະຖິຕິເວົ້າລວມ, ເວົ້າສະເພາະແມ່ນສະຖິຕິສັງຄົມ ໃຫ້ສອດຄ່ອງກັບສະພາບໃນແຕ່ໄລຍະ;

9.2. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ແຜນຍຸດທະສາດ, ແຜນງານ, ໂຄງການ ແລະ ກົດໝາຍ ທີ່ໄດ້ຮັບອະນຸຍາດ ແລະ ການພັດທະນາສະຖິຕິ ສັງຄົມເຮັດໃຫ້ການຜະລິດສະຖິຕິທາງການ ໃນຂົງເຂດດັ່ງກ່າວ ບັນລຸຜົນສຳເລັດຕາມ ວັດຖຸປະສົງ ແລະ ຄາດໝາຍທີ່ວາງໄວ້;

9.3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນດຳເນີນງານ, ຈັດຕັ້ງປະຕິບັດວຽກງານ ການຜະລິດ, ການເຜີຍແຜ່ ສະຖິຕິທາງການ ໃນຂົງເຂດສະຖິຕິສັງຄົມ ຂອງລະບົບການຈັດຕັ້ງສະຖິຕິແຫ່ງຊາດ;

9.4. ສ້າງຕາຕະລາງ ເກັບກຳ, ປື້ມຄູ່ມື ການເກັບກຳ ແລະ ທວງເອົາຂໍ້ມູນສະຖິຕິ. ສັງລວມ, ປຸງແຕ່ງ, ວິໄຈ, ເພື່ອການຈັດພິມ ແລະ ເຜີຍແຜ່ ຂໍ້ມູນສະຖິຕິທາງການ ໃນຂົງເຂດສະຖິຕິ ສັງຄົມ;

9.5. ວາງແຜນ ແລະ ຈັດຕັ້ງປະຕິບັດ ແຜນກໍ່ສ້າງ, ບຳລຸງ ແລະ ຍົກລະດັບຄວາມຮູ້ ຄວາມສາມາດ ກ່ຽວກັບວຽກງານສະຖິຕິ ສັງຄົມ;

9.6. ສະຫຼຸບ, ລາຍງານຜົນຂອງ ການຈັດຕັ້ງປະຕິບັດວຽກງານສະຖິຕິສັງຄົມໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

9.7. ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ V
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ10. ຫຼັກການ ແລະວິທີການເຮັດວຽກ**

ການຈັດຕັ້ງສູນສະຖິຕິປະຈຳແຂວງ ເຄື່ອນໄຫວ ແລະ ດຳເນີນງານຕາມຫຼັກການດັ່ງລຸ່ມນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ, ເສີມຂະຫຍາຍຢ່າງມີຫົວຄິດປະດິດສ້າງ, ການມອບສິດ ແລະ ຄວາມຮັບຜິດຊອບຕ້ອງມີລາຍລັກອັກສອນຢ່າງເປັນທາງການ;

2. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ. ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບອົງການທີ່ກ່ຽວຂ້ອງ ແລະ ເປັນເອກະພາບກັນ;
3. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍ, ພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;
4. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ຂັ້ນເທິງຕົນ ແລະ ລັດຖະບານເປັນປົກກະຕິ.

## ພາກທີ II
## ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນສະຖິຕິປະຈຳເມືອງ, ເທດສະບານ ແລະ ຈຸງານສະຖິຕິປະຈຳບ້ານ

### ໝວດທີVI
### ທີ່ຕັ້ງ ແລະ ພາລະບົດບາດ

ມາດຕາ11 . ທີ່ຕັ້ງ ແລະພາລະບົດບາດ

ສູນສະຖິຕິປະຈຳເມືອງ, ເທດສະບານ ຂຽນຫຍໍ້ **"ສຕມ"** ຂຽນເປັນພາສາຕ່າງປະເທດ **District Statistics Centre (DSC)** ຂຶ້ນກັບຫ້ອງການແຜນການເມືອງ, ເທດສະບານ, ສ່ວນດ້ານວິຊາການ, ການຈັດຕັ້ງ ແລະງົບປະມານທັງໝົດ ຂຶ້ນກັບສູນສະຖິຕິປະຈຳແຂວງ, ນະຄອນ ພາຍໃຕ້ການຊີ້ນຳໂດຍກົງຈາກສູນສະຖິຕິແຫ່ງຊາດ, ສຳລັບຊີວິດການເມືອງ ແມ່ນຂຶ້ນກັບຫ້ອງການ ແຜນການເມືອງ, ເທດສະບານ, ມີພາລະບົດບາດໃນການເກັບກຳ, ສັງລວມ, ປຸງແຕ່ງ, ວິໄຈຂໍ້ມູນ, ເຜີຍແຜ່ ພ້ອມທັງລາຍງານສະຖິຕິທາງການ ກ່ຽວກັບສະພາບເສດຖະກິດ-ສັງຄົມໃນຂອບເຂດເມືອງແຕ່ລະໄລຍະໃຫ້ສູນສະຖິຕິປະຈຳແຂວງ, ສູນສະຖິຕິແຫ່ງຊາດ ແລະ ອົງການປົກຄອງຂັ້ນເມືອງ.

### ໝວດທີVII
### ໜ້າທີ່ ແລະຂອບເຂດສິດ

ມາດຕາ12 . **ໜ້າທີ່**

12.1. ເຜີຍແຜ່, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂບາຍ, ລະບຽບກົດໝາຍ, ແຜນດຳເນີນງານ ກ່ຽວກັບສະຖິຕິ ຢູ່ທ້ອງຖິ່ນຂອງຕົນ;

12.2. ຄົ້ນຄວ້າ ແລະ ສະເໜີ ຕໍ່ສູນສະຖິຕິປະຈຳແຂວງ, ນະຄອນ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ຮັບ ແລະ ຊັບຊ້ອນພະນັກງານສະຖິຕິຂອງຕົນ, ແຕ່ງຕັ້ງ, ຍົກຍ້າຍໜ້າທີ່ ຫລື ປົດຕຳແໜ່ງ, ປະຕິບັດນະໂຍບາຍແລະ ວິໄນຕໍ່ລັດຖະກອນ ແລະ ບຸກຄະລາກອນຂອງຈຸງານສະຖິຕິປະຈຳບ້ານໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

12.3. ຄົ້ນຄວ້າ ແລະ ສະເໜີ ຕໍ່ສູນສະຖິຕິປະຈຳແຂວງ, ນະຄອນ ກ່ຽວກັບການປະຕິບັດ ນະໂຍບາຍ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານໃນການສະໜອງຂໍ້ມູນ ແລະ ປະຕິບັດວິໄນ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ບໍ່ປະຕິບັດຕາມລະບອບການລາຍງານ ແລະ ພັນທະໃນການລາຍງານສະຖິຕິ ເຊິ່ງໄດ້ກຳນົດໄວ້ໃນ ມາດຕາ 20, 22 ແລະ 23 ຂອງກົດໝາຍ ສະບັບນີ້;

12.4. ເກັບກຳຂໍ້ມູນສະຖິຕິ ຕາມການສຳຫຼວດ ແລະ ການລາຍງານບໍລິຫານໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

12.5. ເຜີຍແຜ່ຂໍ້ມູນສະຖິຕິທາງການໃນລະດັບທ້ອງຖິ່ນຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ;

12.6. ບຳລຸງ, ຝຶກອົບຮົມ ດ້ານວິຊາການ ສະຖິຕິ ໃຫ້ແກ່ລັດຖະກອນ ແລະ ບຸກຄະລາກອນຂອງຈຸງານສະຖິຕິ ປະຈຳບ້ານ ຕາມຄວາມຮັບຜິດຊອບຂອງຕົນ;

12.7. ສະຫຼຸບ ແລະ ລາຍງານສະພາບການຈັດຕັ້ງປະຕິບັດວຽກງານສະຖິຕິ ເດືອນ, ປະຈຳງວດ ແລະ ປະຈຳປີ ໃຫ້ສູນສະຖິຕິປະຈຳ ແຂວງ, ນະຄອນ, ຫ້ອງການແຜນການເມືອງ, ເທດສະບານ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

12.8. ປະຕິບັດໜ້າທີ່ອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

## ມາດຕາ13 . ຂອບເຂດສິດ

13.1. ຈັດຕັ້ງເກັບກຳ, ທວງເອົາຂໍ້ມູນສະຖິຕິຈາກພາກສ່ວນທີ່ກ່ຽວຂ້ອງ, ສັງລວມ ແລະ ສະໜອງຂໍ້ມູນສະຖິຕິ ໃຫ້ສູນສະຖິຕິປະຈຳແຂວງ, ນະຄອນ;

13.2. ຕິດຕາມ, ກວດກາ ແລະ ປະເມີນກ່ຽວກັບລະບອບວິທີວິທະຍາສະຖິຕິ ແລະ ການເຄື່ອນໄຫວວຽກງານສະຖິຕິ ຕາມແຜນດຳເນີນງານຂອງຈຸງານສະຖິຕິປະຈຳບ້ານ ແລະ ຜູ້ຮັບຜິດຊອບສະຖິຕິ ຂອງຂະແໜງການອ້ອມຂ້າງເມືອງໃນແຕ່ລະໄລຍະ;

13.3. ປະຕິບັດສິດອື່ນ ຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

# ໝວດທີ VIII
# ໂຄງປະກອບການຈັດຕັ້ງ ແລະ ຫຼັກການເຮັດວຽກ

**ມາດຕາ 14. ໂຄງປະກອບກົງຈັກ**

1. ໜ່ວຍງານສັງລວມ;
2. ໜ່ວຍງານເກັບກຳສະຖິຕິເສດຖະກິດ-ສັງຄົມ.

**ມາດຕາ 15. ໂຄງປະກອບບຸກຄະລາກອນ**

1. ຫົວໜ້າສູນສະຖິຕິປະຈຳເມືອງ, ເທດສະບານ 01 ທ່ານ ມີຖານະທຽບເທົ່າຫົວໜ້າຂະແໜງຂອງສູນສະຖິຕິແຫ່ງຊາດ ແລະ ເທົ່າກັບຮອງຫົວໜ້າຫ້ອງການເມືອງ, ເທດສະບານ, ເຊິ່ງໄດ້ຮັບການແຕ່ງຕັ້ງປົດຕຳແໜ່ງຈາກຫົວໜ້າສູນສະຖິຕິແຫ່ງຊາດ ບົນພື້ນຖານຄວາມເປັນເອກະພາບຂອງກົມຈັດຕັ້ງ ແລະ ພະນັກງານກະຊວງແຜນການ ແລະການລົງທຶນ ແລະ ອີງການປົກຄອງທ້ອງຖິ່ນ, ພ້ອມກັນນັ້ນກໍ່ຍັງມີວິຊາການຈຳນວນໜຶ່ງປະກອບເຂົ້າໃນແຕ່ລະຕຳແໜ່ງງານ, ຫົວໜ້າສູນສະຖິຕິປະຈຳເມືອງ, ເທດສະບານ ມີຄວາມຮັບຜິດຊອບໂດຍກົງຕໍ່ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງ ປະຕິບັດໜ້າທີ່ ແລະ ຂອບເຂດສິດທີ່ໄດ້ກຳນົດໄວ້ໃນມາດຕາ 10 ແລະ 11 ຂອງຂໍ້ຕົກ ລົງສະບັບນີ້;
2. ສູນສະຖິຕິປະຈຳເມືອງ, ເທດສະບານ ປະກອບມີຮອງຫົວໜ້າສູນຈຳນວນໜຶ່ງ ມີຖານະທຽບເທົ່າຮອງຫົວໜ້າຂະແໜງຂອງສູນສະຖິຕິແຫ່ງຊາດ, ທັງເປັນຫົວໜ້າໜ່ວຍງານຂອງສູນສະຖິຕິປະຈຳເມືອງ, ເທດສະບານ, ເຊິ່ງໄດ້ຮັບການແຕ່ງຕັ້ງປົດຕຳແໜ່ງ ຈາກຫົວໜ້າສູນສະຖິຕິແຫ່ງຊາດ ບົນພື້ນຖານຄວາມເປັນເອກະພາບຂອງກົມຈັດຕັ້ງ ແລະ ພະນັກງານກະຊວງແຜນການ ແລະ ການລົງທຶນ.

**ມາດຕາ 16. ຫຼັກການ ແລະ ວິທີການເຮັດວຽກ**

1. ທຸກການເຄື່ອນໄຫວຂອງຂອງສູນສະຖິຕິປະຈຳເມືອງ, ເທດສະບານ ຕ້ອງຍຶດໝັ້ນແນວທາງ ຂອງພັກລະບຽບຫລັກການຂອງລັດ ພາຍໃຕ້ການຊີ້ນຳນຳພາຂອງເຈົ້າເມືອງ ແລະ ຫົວໜ້າສູນສະຖິຕິປະຈຳແຂວງ, ນະຄອນ;
2. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ, ເສີມຂະຫຍາຍຢ່າງມີຫົວຄິດປະດິດສ້າງ, ການມອບສິດ ແລະ ຄວາມຮັບຜິດຊອບຕ້ອງມີລາຍລັກອັກສອນຢ່າງເປັນທາງການ;

3. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ. ແກ້ໄຂວຽກງານຢ່າງມີຈຸດສຸມ ແລະມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບອົງການທີ່ກ່ຽວຂ້ອງ ແລະ ເປັນເອກະພາບກັນ;
4. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍ, ພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;
5. ປະຕິບັດລະບອບປະຊຸມປະຈໍາເດືອນ, 3 ເດືອນ, 6 ເດືອນ ຫຼື ປະຈໍາປີ ແລະປະຕິບັດລະບອບລາຍງານໃຫ້ຂັ້ນເທິງຕົນ ແລະ ລັດຖະບານເປັນປົກກະຕິ.

## ໝວດທີ IX
## ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຈຸງານສະຖິຕິປະຈໍາບ້ານ

**ມາດຕາ16. ທີ່ຕັ້ງ ແລະ ພາລະບົດບາດ**

ຈຸງານສະຖິຕິປະຈໍາບ້ານ ແມ່ນພາກສ່ວນໜຶ່ງຂອງອົງການປົກຄອງບ້ານ, ສ່ວນດ້ານວິຊາການຂຶ້ນກັບສູນສະຖິຕິປະຈໍາເມືອງ, ເທດສະບານ; ມີພາລະບົດບາດໃນການເກັບກໍາສັງລວມຂໍ້ມູນສະພາບເສດຖະກິດ-ສັງຄົມ ໃນຂອບເຂດບ້ານ ໃນແຕ່ລະໄລຍະເຂົ້າໃນປຶ້ມສະຖິຕິປະຈໍາບ້ານ ພ້ອມທັງລາຍງານໃຫ້ສູນສະຖິຕິປະຈໍາເມືອງ, ເທດສະບານ ແລະ ອໍານາດການປົກຄອງບ້ານ.

**ມາດຕາ17. ໜ້າທີ່**

1. ເກັບກໍາ ແລະ ສັງລວມ ຂໍ້ມູນສະຖິຕິຈາກຫົວໜ່ວຍພື້ນຖານ ໃນຂອບເຂດບ້ານ ຂອງຕົນໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງບ້ານ;
2. ເຂົ້າຮ່ວມດໍາເນີນປະຕິບັດການສໍາຫຼວດຕ່າງໆ ຕາມການມອບໝາຍຂອງຂັ້ນເທິງ;
3. ສະຫຼຸບ, ລາຍງານສະພາບການຈັດຕັ້ງປະຕິບັດວຽກງານສະຖິຕິປະຈໍາງວດ ແລະ ປະຈໍາປີ ຕໍ່ສູນສະຖິຕິປະຈໍາເມືອງ, ເທດສະບານ ແລະ ອົງການປົກຄອງບ້ານຢ່າງເປັນປົກກະຕິ;
4. ປະຕິບັດໜ້າທີ່ອື່ນຕາມລະບຽບກົດໝາຍ ແລະ ການມອບໝາຍຂອງຂັ້ນເທິງ.

## ໝວດທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 18. ໃບປະມານ ແລະ ຕາປະທັບ**

ສູນສະຖິຕິປະຈຳແຂວງ, ນະຄອນ, ສູນສະຖິຕິປະຈຳເມືອງ, ເທດສະບານ ມີງົບປະມານ ແລະ ຕາປະທັບຂອງຕົນຕາມສາຍຕັ້ງທີ່ໄດ້ກຳນົດໄວ້ໃນມາດຕາ 58 ແລະ ມາດຕາ 59 ຂອງ ກົດໝາຍວ່າດ້ວຍສະຖິຕິເພື່ອຮັບໃຊ້ໃນການເຄື່ອນໄຫວວຽກງານທາງລັດຖະການ, ບາງຂະແໜງການ ທີ່ຈຳເປັນມີຕາປະທັບຮັບໃຊ້ວຽກງານຂອງຕົນເອງ.

**ມາດຕາ 19. ການຜັນຂະຫຍາຍ**

ມອບໃຫ້ພະແນກແຜນການ ແລະ ການລົງທຶນແຂວງ ຄຸ້ມຄອງ ແລະ ກວດກາວຽກງານ ສະຖິຕິ ຕາມທີ່ໄດ້ກຳນົດໄວ້ພາກ VII ໝວດI ແລະ ໝວດ II ມາດຕາ 46 ແລະ ມາດຕາ 49 ຂອງກົດໝາຍວ່າດ້ວຍສະຖິຕິ.

**ມາດຕາ 20. ການຈັດຕັ້ງປະຕິບັດ**

ຫ້ອງການ, ບັນດາກົມ ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະການລົງທຶນ, ສູນສະຖິຕິປະຈຳແຂວງ, ນະຄອນ, ສູນສະຖິຕິປະຈຳເມືອງ, ເທດສະບານ, ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 21. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງແຜນການ ແລະ ການລົງທຶນ

ທ່ານ ສົມດີ ດວງດີ